

# <u>ປູກຕົ້ນໄມ້ " ຄືນແຜນດິນສີຂຽວໃຫ້ເຍົາວະຊົນ "</u>
# <u>ຂອງ 03 ອົງການຈັດຕັ້ງມະຫາຊົນ ໜ່ວຍກົມເຍົາວະຊົນ ສູນກາງ ຊປປລ</u>

ໃນວັນທີ 11 ມິຖຸນາ 2016 ເວລາ 9:00 ທີ່ສະໂມສອນໂຮງຮຽນປະຖົມດົງກະລຶມ ເມືອງປາກງື່ມ ນະຄອນຫຼວງວຽງຈັນ ໄດ້ຈັດຕັ້ງກິດຈະກຳປູກຕົ້ນໄມ້ຂຶ້ນຢ່າງເປັນທາງການ ພາຍໃຕ້ການເປັນປະທານຂອງ ທ່ານ ນ ອະມິດຕາ ສີປະມວນ ຮອງເລຂາພັກເມືອງ ຮອງເຈົ້າເມືອງ ເມືອງປາກງື່ມ ແລະ ທ່ານ ນ ສົມສະນິດ ແກ້ວດວງດີ ເລຂາໜ່ວຍພັກ ຫົວໜ້າກົມເຍົາວະຊົນ ສູນກາງ ຊປປລ, ຍັງມີຜູ່ຕາງໜ້າຊາວໜຸ່ມນະຄອນຫຼວງ, ພະນັກງານ ກົມເຍົາວະຊົນ ແລະ ສະມາຊິກ 3 ອົງການຈັດຕັ້ງພາຍໃນ ສູນກາງ ຊປປລ, ຄະນະບໍລິຫານຊາວໜຸ່ມເມືອງປາກງື່ມ, ນາຍບ້ານ, ບັນດາຄະນະອຳນວຍການໂຮງຮຽນ ປະຖົມດົງກະລຶມ, ປະຖົມສິງ ຫອມ, ປະຖົມດອນວັງໂພ, ປະຖົມຖິ່ນພຽງ, ຄູອາຈານ, ຜູ່ໃຫ້ການອຸປະຖຳມີ ຫ້ອງຂໍ້ມູນຂ່າວສານ ແລະ ປະຊາສຳພັນ ລັດວິສະຫະກິດໄຟຟ້າລາວ, ທະນາຄານນະໂຍບາຍ ຕະຫຼອດຮອດພໍ່ແມ່ຜູ່ປົກຄອງ ແລະ ຫຼານນ້ອຍອະນຸຊົນ-ເຍົາວະຊົນ ທີ່ເຂົ້າຮ່ວມໃນງານ ຈຳນວນທັງໝົດ 400 ຄົນ ຍິງ 203 ຄົນ.

ໃນງານຄັ້ງນີ້ໄດ້ຮັບຟັງການເລົ່າປະຫວັດວັນເດັກ ແລະ ຄວາມສຳຄັນຂອງປ່າໄມ້ ຈາກທ່ານ ນ ສົມສະນິດ ແກ້ວດວງດີ ເລຂາໜ່ວຍພັກ ຫົວໜ້າກົມເຍົາວະຊົນ ແລະ ຮັບກຽດກ່າວຕ້ອນຮັບຈາກທ່ານ ນ ອະມິດຕາ ສີປະມວນ ຮອງເລຂາພັກເມືອງ ຮອງເຈົ້າເມືອງ ເມືອງປາກງື່ມ ຢ່າງອົບອຸ່ນ. ພິເສດໃນງານໄດ້ຈັດກິດຈະກຳປູກເບ້ຍໄມ້ຈຳນວນ 500 ເບ້ຍ ໂດຍແມ່ນຜູ່ເຂົ້າຮ່ວມຮ່ວມກັນປູກ. ຫຼັງຈາກນັ້ນ ທາງກົມເຍົາວະຊົນ, ລັດວິສະຫະກິດໄຟຟ້າລາວ ແລະ ທະນາຄານນະໂຍບາຍ ຮ່ວມກັນແຈກຢາຍ ຂະໜົມ, ປຶ້ມ, ອຸປະກອນການສຶກສາ ແລະ ເຄື່ອງຫຼິ້ນກິລາ ໃຫ້ໂຮງຮຽນ ແລະ ນ້ອງເຍົາວະຊົນ ຕະຫຼອດຮອດພໍ່ແມ່ຜູ່ປົກຄອງ ທີ່ເຂົ້າຮ່ວມງານ ແລະ ຊົມການສະແດງຕ່າງໆຂອງເຍົາວະຊົນເຊັ່ນ: ສິລະປະວັນນະຄະດີ 4 ລາຍການ ຟ້ອນ ແລະ ຮ້ອງເພງ ຈົບດ້ວຍຫຼິ້ນເກມມ່ວນ ຊື່ນຫຼາກຫຼາຍຮູບແບບ ຈາກກົມເຍົາວະຊົນ ແລະ ລັດວິສະຫະກິດໄຟຟ້າລາວ ເປັນຜູ່ນຳພາຫຼິ້ນ ໂດຍມີຂອງຂັວນຂອງລາງ ວັນແຈກເປັນຈຳນວນຫຼວງຫຼາຍ. ອະນຸຊົນ-ເຍົາວະຊົນ ແລະ ຜູ່ເຂົ້າຮ່ວມງານແມ່ນໄດ້ຮັບຂະໜົມ ແລະ ອຸປະກອນ ກັນໝົດທຸກຄົນ ດ້ວຍໃບໜ້າຍິ້ມແຍ້ມ ແລະ ມ່ວນຊື່ນ.

***ຂຽນໂດຍ: ກົມເຍົາວະຊົນ ສູນກາງ ຊປປລ***